bໍລິສັດ AGL ປະກັນໄພລາວ
Assurances General Laos

# ເອກະສານຄັດຕິດປະກັນໄພລົດແບບຂັບຂີ່ສະບາຍ (WYFI)

## ຂອງ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ (ຜູ້ປະກັນໄພ)

## ຫຼັກການສຳຄັນຂອງການຄຸ້ມກັນ

ການຄຸ້ມກັນຂອງສັນຍາສະບັບນີ້ໄດ້ອີງໃສ່ເງື່ອນໄຂທົ່ວໄປຂອງການປະກັນໄພລົດ

1. **ຄຸ້ມກັນຄວາມເສຍຫາຍຂອງລົດປະກັນໄພຈາກອຸປະຕິເຫດການຕຳ.**

   1.1 ຜູ້ປະກັນໄພ ຈະຄຸ້ມກັນຄວາມເສຍຫາຍຂອງລົດປະກັນໄພທີ່ມີສາເຫດຈາກການຕຳກັບພາຫະນະທາງບົກທີ່ແລ່ນດ້ວຍເຄື່ອງຈັກ ແລະ ພະລັງງານໄຟຟ້າ (ໝໍ້ໄຟ) ເທົ່ານັ້ນ ,ຕາມຄວາມເສຍຫາຍຕົວຈິງ ໃນນັ້ນຈະຫັກອອກມູນຄ່າຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ຖ້າມີ, ຕາມລາຍລະອຽດຂໍ້ ຊຶ່ງສູງສຸດບໍ່ເກີນມູນຄ່າຄຸ້ມກັນທີ່ລະບຸໃນສັນຍາປະກັນໄພ ແລະ ພາຍໃຕ້ເງື່ອນໄຂທີ່ວ່າ:

   → ພາຫະນະດັ່ງກ່າວ (ຄູ່ກໍລະນີ) ຕ້ອງເປັນຂອງບຸກຄົນອື່ນ (ທີ່ບໍ່ຢູ່ໃນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ) ຊຶ່ງສາມາດຮູ້ຕົວເຈົ້າຂອງລົດໄດ້.

   → ອຸປະຕິເຫດຕ້ອງເກີດຢູ່ນອກສະຖານທີ່ສ້ອມແປງລົດ, ບ່ອນມ້ຽນລົດ ຫຼື ສະຖານທີ່ ທີ່ຜູ້ໄດ້ຮັບການປະກັນໄພອາໄສຢູ່.

   1.2 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ແມ່ນມູນຄ່າຄວາມເສຍຫາຍເບື້ອງຕົ້ນ ຕໍ່ຄວາມເສຍຫາຍໜຶ່ງຄັ້ງ ທີ່ຜູ້ໄດ້ຮັບການປະກັນໄພຕ້ອງຈ່າຍເອງ

2. **ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ຂໍ້ "ກ ແລະ ຂ"**

   ມູນຄ່າຄຸ້ມກັນທີ່ກຳນົດໃນສັນຍາປະກັນໄພສະບັບນີ້ແມ່ນຄວາມຮັບຜິດຊອບສູງສຸດຂອງ ຜູ້ປະກັນໄພ ການທົດແທນຄືນຈະໄດ້ປະຕິບັດດັ່ງລຸ່ມນີ້:

   2.1 ການທົດແທນຕາມຄວາມຮັບຜິດຊອບແທ້ຈິງຂອງຜູ້ໄດ້ຮັບການປະກັນໄພ. ການທົດແທນຄວາມເສຍຫາຍດ້ານຮ່າງກາຍ ແລະ ວັດຖຸແມ່ນອີງຕາມອັດຕາສ່ວນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ແຕ່ສູງສຸດບໍ່ເກີນມູນຄ່າຄຸ້ມກັນທີ່ກຳນົດໃນສັນຍາ. ສຳລັບການພິການຖາວອນບາງສ່ວນຈະອີງຕາມອັດຕາພິການທຽບໃສ່ (ຄູນໃຫ້) ຈຳນວນເງິນທີ່ຕ້ອງຈ່າຍໃນການພິການຖາວອນທັງໝົດ.

   2.2 ການທົດແທນພາຍໃຕ້ຫຼັກການຄວາມຮັບຜິດຊອບບໍ່ຖືຄວາມຜິດ, ສະເພາະຄວາມເສຍຫາຍດ້ານຮ່າງກາຍ ກໍລະນີຍັງບໍ່ທັນຮູ້ວ່າໃຜເປັນຜູ້ຮັບຜິດຊອບຄວາມເສຍຫາຍ ຜູ້ປະກັນໄພ ຈະທົດແທນກ່ອນຕາມລະບຽບກົດໝາຍສູງສຸດ 10,000,000 ກີບ ຕໍ່ອຸປະຕິເຫດ 1 ຄັ້ງ ຊຶ່ງໃນນັ້ນຕໍ່ຜູ້ເຄາະຮ້າຍ 1 ຄົນ ກໍລະນີເສຍຊີວິດ ຫຼື ພິການຖາວອນທັງໝົດແມ່ນ 3,000,000 ກີບ, ຄ່າປິ່ນປົວ 1,800,000 ກີບ. ສຳລັບການພິການຖາວອນບາງສ່ວນແມ່ນຈະປະຕິບັດຕາມຂໍ້ 2.1 ຂ້າງເທິງນັ້ນ.

3. **ການຄຸ້ມກັນຜູ້ຂັບຂີ່ ຂໍ້ "ຄ"**

   ຜູ້ປະກັນໄພ ຈະຄຸ້ມກັນບຸກຄົນທີ່ມີເງື່ອນໄຂຄົບຖ້ວນຂອງຜູ້ຂັບຂີ່ ແລະ ໄດ້ຮັບອະນຸຍາດຈາກຜູ້ໄດ້ຮັບການປະກັນໄພໃຫ້ຂັບລົດ ແຕ່ພາຍໃຕ້ເງື່ອນໄຂ ທີ່ວ່າຜູ້ກ່ຽວບໍ່ໄດ້ຮັບການທົດແທນຈາກການຄຸ້ມກັນອື່ນ ຫຼື ໄດ້ຮັບແຕ່ບໍ່ພຽງພໍ ແລະ ຜູ້ປະກັນໄພ ຈະຊົດເຊີຍແຕ່ສະເພາະສ່ວນທີ່ບໍ່ພຽງພໍເທົ່ານັ້ນ ຊຶ່ງສູງສຸດບໍ່ເກີນມູນຄ່າຄຸ້ມກັນທີ່ລະບຸໄວ້ໃນສັນຍາ.

4. **ການປົກປ້ອງສິດ ແລະ ຮຽກຮ້ອງຄ່າເສຍຫາຍ ຂໍ້ "ຍ"**

   ພາຍໃນ ຂອບເຂດວົງເງິນປະກັນໄພສູງສຸດ ສຳລັບ ຄວາມເສຍຫາຍແຕ່ລະຢ່າງ ຕາມທີ່ໄດ້ກຳນົດໄວ້ໃນ ເງື່ອນໄຂຂອງສັນຍາປະກັນໄພ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຖືກຮ້ອງຟ້ອງ ໂດຍບຸກຄົນທີສາມ ເພື່ອຮຽກຮ້ອງໃຫ້ໃຊ້ແທນຄວາມເສຍຫາຍ ແລະ/ຫຼື ຄວາມສູນເສຍໃດໜຶ່ງ ອັນເປັນຜົນມາຈາກ ອຸປະຕິເຫດ, ຜູ້ປະກັນໄພ ຈະປົກປ້ອງສິດ ແລະ/ຫຼື ຜົນປະໂຫຍດ ຂອງ ຜູ້ໄດ້ຮັບການປະກັນໄພ. ໃນທາງກົງກັນຂ້າມ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຮ້ອງຟ້ອງ ບຸກຄົນທີສາມ ເພື່ອຮຽກຮ້ອງເອົາຄ່າເສຍຫາຍ ແລະ/ຫຼື ຄ່າສູນເສຍທີ່ເກີດຈາກອຸປະຕິເຫດ,

   **ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ປະກັນໄພ:**

   - ໃຫ້ຄຳແນະນຳທາງດ້ານເຕັກນິກ,
   - ຊ່ວຍໃນການກະກຽມເອກະສານຕ່າງໆ,
   - ຊ່ວຍຕິດຕາມຄະດີ ສຳລັບ ຜູ້ໄດ້ຮັບການປະກັນໄພ ເທົ່ານັ້ນ.

   **ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ໄດ້ຮັບການປະກັນໄພ:**

   - ສະໜອງຂໍ້ມູນ ແກ່ ເຈົ້າໜ້າທີ່ຕຳຫຼວດ ດ້ວຍຕົນເອງ;
   - ສະໜອງຂໍ້ມູນຫຼັກຖານ ແກ່ ຕຳຫຼວດ / ສານ,
   - ໃຫ້ຄຳໃຫ້ການ ຫຼື ຄຳໂຕ້ແຍ້ງ,
   - ເຂົ້າຮ່ວມການປະຊຸມ ຕາມການສະເໜີ,
   - ເຂົ້າຮ່ວມຟັງຄຳຕັດສິນ ແລະ ອື່ນໆ...

**ກໍລະນີຍົກເລີກສັນຍາ**

ກໍລະນີຍົກເລີກສັນຍາ, ຕ້ອງສົ່ງຄືນໃບຢັ້ງຢືນ ແລະ ສັນຍາປະກັນໄພລົດ, ຄ່າທຳນຽມປະກັນໄພທີ່ຈະໄດ້ສົ່ງຄືນດັ່ງລຸ່ມນີ້ (ສະເພາະສັນຍາປະກັນໄພທີ່ບໍ່ເກີດອຸປະຕິເຫດເທົ່ານັ້ນ):

| ຈຳນວນມື້ທີ່ໃຊ້ແລ້ວ | ≤ 30 | 31-60 | 61-90 | 91-120 | 121-150 | 151-180 | 181-210 | 211-240 | 241-270 | 271-300 | 301-330 | 331-365 |
|---|---|---|---|---|---|---|---|---|---|---|---|---|
| % ທຽບໃສ່ຄ່າທຳນຽມປີ | 72 | 66 | 60 | 52 | 44 | 32 | 27 | 22 | 15 | 12 | 5 | 0 |

**ຂໍ້ຄວນລະວັງ**

1. ຄວາມເສຍຫາຍທີ່ເກີດຈາກຜູ້ຂັບຂີ່ ທີ່ບໍ່ມີໃບຂັບຂີ່ຖືກຕ້ອງຕາມປະເພດລົດ ຫຼື ໃນຂະນະມຶນເມົາ, ບໍ່ວ່າຈະເກີດຈາກລົດຢາເສບຕິດ, ສານເຄມີທີ່ມີລິດຕໍ່ປະສາດ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າທຽບເທົ່າ ຫຼື ເກີນກວ່າ 0.24mg/l ໃນລົມຫາຍໃຈ ຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ.
2. ສັນຍາສະບັບນີ້ບໍ່ຄຸ້ມກັນຄວາມເສຍຫາຍໃດໆ ທີເກີດຂຶ້ນຕໍ່ໂຕລົດປະກັນໄພ ໃນສະຖານທີ່ສ້ອມແປງລົດ, ບ່ອນມ້ຽນລົດ ຫຼື ອາຄານສະຖານທີ່ ທີ່ຜູ້ໄດ້ຮັບການປະກັນໄພອາໄສຢູ່.
3. ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມບໍ່ຄຸ້ມກັນຄວາມເສຍຫາຍຕໍ່ວັດຖຸຊັບສິນທີ່ເກີດຈາກການສັ່ນສະເທືອນ ຫຼື ຈາກການກົດທັບຂອງລົດທີ່ໄດ້ຮັບການປະກັນໄພຕໍ່ກັບເຄື່ອງຊັ່ງນໍ້າໜັກ, ຖະໜົນຫົນທາງ, ຂົວ, ທາງຄົນຍ່າງ, ເດີ່ນສາທາລະນະ ຫຼື ສວນບຸກຄົນ ລວມທັງຄວາມເສຍຫາຍທີ່ເກີດກັບສິ່ງອື່ນໆທີ່ຢູ່ລຸ່ມສິ່ງດັ່ງກ່າວ.
4. ອີງໃສ່ມາດຕາ 34 ຂອງດຳລັດນາຍົກລັດຖະມົນຕີເລກທີ 188/ນຍ ລົງວັນທີ 03/07/2007, ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມບໍ່ຄຸ້ມກັນຄວາມເສຍຫາຍຕໍ່ວັດຖຸຊັບສິນທີ່ເກີດຈາກຄວາມສູງເກີນກຳນົດຂອງລົດ ແລະ ເຄື່ອງທີ່ບັນທຸກ ຕໍ່ສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະໂຄ່ງ, ສາຍໂທລະພາບ ຫຼື ອື່ນໆ ລວມທັງຄວາມເສຍຫາຍທີ່ເກີດຂຶ້ນກັບວັດຖຸສິ່ງຂອງທີ່ກ່ຽວຂ້ອງກັບສິ່ງດັ່ງກ່າວ.
5. ກໍລະນີລົດຖືກຂາຍ ຫຼື ໂອນກຳມະສິດ, ສັນຍາປະກັນໄພຈະສິ້ນສຸດລົງໂດຍອັດຕະໂນມັດ. ດັ່ງນັ້ນເຈົ້າຂອງລົດຜູ້ໃໝ່ຕ້ອງໄດ້ຊື້ປະກັນໄພໃໝ່ຈຶ່ງຈະຖືກຄຸ້ມກັນ.
6. ທຸກຄວາມເສຍຫາຍທີ່ເກີດຈາກການກໍ່ການຮ້າຍ, ອາຊະຍາກຳ ຫຼື ເຫດສຸດວິໄສ ທີ່ບໍ່ໄດ້ຍົກເວັ້ນໃນສັນຍາ ຈະບໍ່ໄດ້ຮັບການຄຸ້ມກັນ.
7. ກໍລະນີເກີດອຸປະຕິເຫດ ຜູ້ໄດ້ຮັບການປະກັນໄພຕ້ອງແຈ້ງ ຜູ້ປະກັນໄພ ທັນທີ ໂທ: 1456 ຫຼື (021) 222 222. ນອກນີ້ສຳລັບອຸປະຕິເຫດທີ່ເກີດຢູ່ປະເທດໄທ ຜູ້ໄດ້ຮັບການປະກັນໄພ ຍັງຕ້ອງສົ່ງໃບລາຍງານອຸປະຕິເຫດຈາກເຈົ້າໜ້າທີ່ໄທໃຫ້ ຜູ້ປະກັນໄພ ຕື່ມອີກ.
8. ຄວາມຮັບຮູ້ຕໍ່ຄວາມຮັບຜິດຊອບໃດໆ ແລະ ຄຳຕົກລົງໃດໆ ທີ່ບໍ່ໄດ້ຮັບການເຫັນດີຈາກ ຜູ້ປະກັນໄພ ກ່ອນ ຈະບໍ່ມີຜົນບັງຄັບໃຊ້.
9. ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ກ່ຽວຂອງໃນສັນຍານີ້ມີພັນທະໃນການສະໜອງຂໍ້ມູນຢ່າງຄົບຖວນແລະຖືກຕ້ອງໃຫ້ກັບ ຜູ້ປະກັນໄພ ແລະ ເຫັນດີໃຫ້ ຜູ້ປະກັນໄພ ເຂົ້າເຖິງ, ເກັບກຳ, ຮຽກເອົາ, ນຳໃຊ້ຂໍ້ມູນຈາກຜູ້ກ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ.